ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 3323 /ຫອຄ.ກຫຄວ

ນະຄອນຫຼວງວຽງຈັນ, ວັນທີ 25 ທັນວາ 2018

# ແຈ້ງການ

ເຖິງ: ບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ຂັ້ນຕ່າງໆ

ເລື່ອງ: ເລື່ອນການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ແລະ ການອອກອະນຸຍາດລົງທຶນ ຫລື ອະນຸຍາດດຳເນີນທຸລະກິດຕາມຄຳສັ່ງຂອງນາຍົກ, ເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018

ເພື່ອສ້າງເງື່ອນໄຂຄວາມພ້ອມ ໃນໄລຍະລໍຖ້າການປະກາດໃຊ້ບັນຊີຄວບຄຸມ ແລະ ການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຍົກເວັ້ນການປະຕິບັດບາງມາດຕາ ຂອງກົດໝາຍສົ່ງເສີມການລົງທຶນ ແລະກົດໝາຍວິສາຫະກິດ ທັງເພື່ອຮັບປະກັນປະສິດທິຜົນຂອງການຈັດຕັ້ງປະຕິບັດວຽກງານການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ແລະ ການອອກອະນຸຍາດ ຕາມຄຳສັ່ງເລກທີ 02/ນຍ, ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ຂໍຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ດັ່ງນີ້:

1. ເລື່ອນການເລີ່ມປະຕິບັດການຂຶ້ນທະບຽນສ້າງຕັ້ງວິສາຫະກິດ, ການອອກອະນຸຍາດລົງທຶນ ຫລື ອະນຸຍາດດຳເນີນທຸລະກິດ ຕາມຄຳສັ່ງ, ສະບັບເລກທີ 02/ນຍ ຈາກວັນທີ 1 ມັງກອນ 2019 ຕາມທີ່ບົ່ງໄວ້ໃນແຈ້ງການ, ເລກທີ 2009/ຫອຄ.ກຫຄວ, ລົງວັນທີ 22 ສິງຫາ 2018 ມາເປັນວັນທີ 1 ກຸມພາ 2019;

2. ໃນໄລຍະແຕ່ນີ້ ຫາ ວັນທີ 1 ກຸມພາ 2019 ໃຫ້ແຕ່ລະພາກສ່ວນຈັດຕັ້ງປະຕິບັດວຽກງານການໃຫ້ບໍລິການ ທີ່ຕິດພັນກັບການເລີ່ມຕົ້ນທຸລະກິດ ຕາມປົກກະຕິ ແຕ່ໃຫ້ມີຄວາມສະດວກ ວ່ອງໄວຍິ່ງຂຶ້ນ, ໃນນີ້:

- ຂໍຄວາມຮ່ວມມືຈາກບັນດາກົມ ຫລືພາກສ່ວນຕ່າງໆທີ່ກ່ຽວຂ້ອງຂອງກະຊວງ, ທະບວງກົມ ສ້າງ ຫລື ປັບປຸງນິຕິກຳການພິຈາລະນາ ແລະ ການແບ່ງຂັ້ນຄຸ້ມຄອງການອອກອະນຸຍາດດຳເນີນທຸລະກິດ, ພ້ອມທັງຄົ້ນຄວ້າບັນຊີກິດຈະການຕ້ອງຂໍອະນຸຍາດ ແລະ ບໍ່ຈຳເປັນຂໍອະນຸຍາດດຳເນີນທຸລະກິດ ໂດຍໄວ;
- ໃຫ້ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ລາຍງານອຳນາດການປົກຄອງທ້ອງຖິ່ນຂອງຕົນ ເພື່ອກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ແລະ ການອອກອະນຸຍາດ ຕາມເນື້ອໃນ ຈິດໃຈຄຳສັ່ງຂອງນາຍົກດັ່ງກ່າວ ໃຫ້ບັນລຸຜົນ ຕາມຄາດໝາຍທີ່ວາງໄວ້, ໃນກໍລະນີ ມີບັນຫາໃຫ້ພົວພັນກັບກະຊວງອຸດສາຫະກຳ ແລະການຄ້າ (ກົມທະບຽນ ແລະຄຸ້ມຄອງວິສາຫະກິດ);

ແຈ້ງມາເພື່ອຊາບ ແລະ ຂໍຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ດ້ວຍ.

ຫົວໜ້າຫ້ອງການ

ທ.ບານສະຕິ ເທບພະວົງ

ບ່ອນສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
- ບັນດາຂະແໜງການກ່ຽວຂ້ອງ;
- ຫ້ອງວ່າການປົກຄອງແຂວງ, ນະຄອນຫລວງ;
- ສະພາການຄ້າ ແລະອຸດສາຫະກຳ ແຫ່ງຊາດລາວ;
- ພະແນກອຸດສາຫະກຳ ແລະການຄ້າ ແຂວງ, ນະຄອນຫລວງ.